ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານປົກຄອງແຂວງຄຳມ່ວນ

ເລກທີ 04/ຈຂ/ຄມ
ຄຳມ່ວນ, ລົງວັນທີ 10 ສິງຫາ 2015

# ຄຳສັ່ງ

ເຖິງ : ບັນດາເມືອງ, ພະແນກການ, ກົມກອງ, ຫ້ອງການ, ອົງການທຽບເທົ່າ ແລະ ລັດວິສາຫະກິດຕ່າງໆ ພາຍໃນແຂວງຄຳມ່ວນ.

ເລື່ອງ : ການສະກັດກັ້ນກຸ່ມຄົນບໍ່ດີທີ່ລັກອຸປະກອນສາຍໄຟຟ້າແຮງສູງ ແລະ ຫ້າມບໍ່ໃຫ້ປູກຕົ້ນໄມ້, ສິ່ງປຸກສ້າງຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ໃນເຂດແຂວງຄຳມ່ວນ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ແຈ້ງການ ຂອງລັດວິສາຫະກິດໄຟຟ້າລາວ,ສະບັບເລກທີ 0308/ຟຟລ,ລົງວັນທີ 25/1/2013
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ຄຸ້ມຄອງລະບົບສົ່ງໄຟຟ້າພາກກາງ 2 ສະບັບເລກທີ 1/1189 /ຟຟລ-ຄລສກ2, ລົງວັນທີ 29 ກໍລະກົດ 2015.

ເນື່ອງຈາກວ່າໄລຍະຜ່ານມາ ໄດ້ມີປະກົດການບຸກຄົນ ຫລື ກຸ່ມຄົນບໍ່ດີຈຳນວນໜຶ່ງ ໄດ້ລັກເອົາສິ້ນສ່ວນອຸປະກອນຂອງເສົາໄຟຟ້າແຮງສູງ ເຊິ່ງເປັນຊັບສິນຂອງຊາດ ແລະ ໄດ້ກໍ່ໃຫ້ເກີດຄວາມເສຍຫາຍເປັນຈຳນວນຫລວງຫລາຍ ຢູ່ບັນດາລະບົບຕາຂ່າຍ, ສາຍ ສົ່ງ ແລະ ໂຄງການຕ່າງໆທີ່ນຳໃຊ້ໄຟຟ້າ ອັນເຮັດໃຫ້ລັດເສຍງົບປະມານໃນການສ້ອມແປງ, ບຳລຸງຮັກສາ ແລະ ມີບາງຂົງເຂດຍັງມີສະພາບການປູກຕົ້ນໄມ້ອຸດສາຫະກຳຂະໜາດໃຫຍ່ຢູ່ກ້ອງສາຍສົ່ງໄຟຟ້າແຮງສູງ ເຊິ່ງກໍ່ໃຫ້ເກີດບັນຫາໄຟຕົກໄຟມອດ, ມີການສູນເສຍພະລັງງານ ແລະຂັດກັບເຕັກນິກຂອງໄຟຟ້າລາວ ເຮັດໃຫ້ທາງຫ້ອງການລະບົບສົ່ງໄຟຟ້າພາກກາງ 2 ພົບຄວາມຫຍຸ້ງຍາກໃນການຄຸ້ມຄອງຕິດຕາມກວດກາ. ສະນັ້ນເພື່ອໃຫ້ທຸກພາກສ່ວນຮັບຮູ້ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການສະກັດກັ້ນ, ຢຸດຢັ້ງກຸ່ມຄົນບໍ່ດີທີ່ລັກເອົາອຸປະກອນເສົາໄຟຟ້າແຮງສູງ ແລະບັນຫາຕົ້ນໄມ້ໃຫຍ່ຢູ່ກ້ອງສາຍສົ່ງໃຫ້ທັນການ.

## ເຈົ້າແຂວງ ຄຳມ່ວນອອກຄຳສັ່ງ:

1. ໃຫ້ທຸກພາກສ່ວນແຕ່ຂັ້ນແຂວງ, ເມືອງ ຈົນຮອດທ້ອງຖິ່ນຮາກຖານ ຮ່ວມມືກັນໃນການເຝົ້າລະວັງ ແລະ ຕິດຕາມບຸກຄົນ ຫລື ກຸ່ມຄົນບໍ່ດີ ທີ່ສວຍໂອກາດລັກອຸປະກອນສາຍສົ່ງໄຟຟ້າແຮງສູງ ຢູ່ຕາມລະບົບຕາຂ່າຍ, ສາຍສົ່ງ ແລະ ໂຄງການ ຕ່າງໆທີ່ນຳໃຊ້ໄຟຟ້າ, ຖ້າຫາກພົບເຫັນແມ່ນໃຫ້ແຈ້ງຕໍ່ຄະນະກຳມະການສະເພາະກິດ, ເຈົ້າໜ້າທີ່ ຫລື ອຳນາດການປົກຄອງບ້ານທີ່ຢູ່ໃນພື້ນທີ່ຂອບເຂດຄວາມຮັບຜິດຊອບ ເພື່ອຈັບຕົວມາດຳເນີນການຕາມລະບຽບກົດໝາຍ.
2. ນອກຈາກການເຝົ້າລະວັງ ແລະ ການຕິດຕາມການກະທຳຢູ່ສະຖານທີ່ຕ່າງໆແລ້ວ ໃຫ້ທຸກພາກສ່ວນເອົາໃຈໃສ່ສັງເກດ, ຕິດຕາມ ການຂົນສົ່ງເຄື່ອນຍ້າຍ ທີ່ຜິດປົກກະຕິ ແລະ ການຈຳໜ່າຍອຸປະກອນໄຟຟ້າ ຢູ່ບັນດາຮ້ານເກັບຊື້ເຫຼັກເສດ ວ່າມີອຸປະກອນສາຍສົ່ງໄຟຟ້າແຮງສູງ ໄວ້ໃນການຄອບຄອງຫລືບໍ່ ຖ້າພົບເຫັນແມ່ນໃຫ້ແຈ້ງຕໍ່ຄະນະກຳມະການສະ ເພາະກິດ, ເຈົ້າໜ້າທີ່ ຫລື ອຳນາດການປົກຄອງບ້ານ ທາງໂທລະສັບ ຫຼື ໜັງສືສະເໜີ ເພື່ອເປັນບ່ອນອີງໃນການກວດກາ, ກວດຄົ້ນ ແລະ ຈັບກຸມຕົວມາດຳເນີນການຕາມລະບຽບກົດໝາຍ.
3. ໃຫ້ເຈົ້າເມືອງແຕ່ລະເມືອງ ອອກຄຳສັ່ງແນະນຳ ໃຫ້ແຕ່ລະກົມກອງ, ຫ້ອງການ ແລະ ແຕ່ລະບ້ານ ພາຍໃນເມືອງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໄດ້ຮັບຊາບ ແລະ ໃຫ້ຄວາມຮ່ວມມືດັ່ງນີ້:

3.1 ແຕ່ງຕັ້ງຄະນະກຳມະການສະເພາະກິດຂັ້ນເມືອງ ແລະ ຂັ້ນບ້ານທີ່ມີຕາຂ່າຍໄຟຟ້າແຮງສູງຜ່ານ ໂດຍປະກອບມີພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ບ້ານເປັນເຈົ້າການ ໃນການຕິດຕາມ-ກວດກາ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອລາຍງານຕໍ່ເມືອງ ແລະ ຄະນະກຳມະການສະເພາະກິດ.

3.2 ແຈ້ງໃຫ້ນາຍບ້ານທຸກໆບ້ານຮັບຊາບ ເພື່ອຕິດຕາມ - ກວດກາການເຄື່ອນໄຫວຂອງກຸ່ມຄົນບໍ່ດີ ຖ້າຫາກພົບເຫັນກຸ່ມເປົ້າໝາຍ ແມ່ນໃຫ້ລາຍງານພາກສ່ວນທີ່ກ່ຽວຂ້ອງຮັບຊາບ ເພື່ອຈັບຕົວມາດຳເນີນຄະດີຕາມລະບຽບກົດໝາຍ.

3.3 ແຈ້ງໃຫ້ບ້ານເອົາໃຈໃສ່ກວດກາ - ຕິດຕາມ ເບິ່ງບັນດາຮ້ານທີ່ເກັບຊື້ເຫຼັກເສດຕ່າງໆ ວ່າມີການເກັບຊື້ອຸປະກອນເສົາໄຟຟ້າແຮງສູງບໍ່ ຖ້າຫາກພົບເຫັນ ໃຫ້ລາຍງານຄະນະກຳມະການສະເພາະກິດຂັ້ນເມືອງ ຫລື ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຕາມລະບຽບກົດໝາຍ.

3.4 ແຈ້ງໃຫ້ບ້ານຮັບຊາບໃນກໍລະນີຫາກພົບເຫັນຜູ້ກະທຳຜິດລັກລອບເອົາສາຍໄຟຟ້າ, ນອັດ ແລະ ອຸປະກອນໄຟຟ້າອື່ນໆ ແບບເຊິ່ງໜ້າ ແມ່ນສາມາດຈັບກຸມຕົວພ້ອມຂອງກາງນຳມາມອບໃຫ້ເຈົ້າໜ້າທີ່ດຳເນີນຕາມລະບຽບກົດໝາຍ.

3.5 ໃຫ້ບ້ານແຈ້ງຕໍ່ພໍ່ແມ່ປະຊາຊົນພາຍໃນບ້ານຮັບຊາບ ຫ້າມບໍ່ໃຫ້ປຸກສິ່ງປຸກສ້າງ ແລະ ປູກຕົ້ນໄມ້ໃຫຍ່ໃສ່ກ້ອງແລວສາຍສົ່ງໄຟຟ້າແຮງສູງເດັດຂາດເປັນຕົ້ນແມ່ນ: ຕົ້ນຢາງພາລາ, ໄມ້ເກດສະໜາ, ໄມ້ສັກ ແລະອື່ນໆ ທີ່ຂັດຕໍ່ມາດຕະຖານເຕັກນິກໄຟຟ້າລາວ. ນອກຈາກ ຈະເປັນພືດອາຍຸສັ້ນ ແລະ ຫາກບຸກຄົນໃດຫາກລະເມີດແມ່ນຈະບໍ່ມີຄ່າຊົດເຊີຍແຕ່ຢ່າງໃດເລີຍ.

3.6 ໃຫ້ຂະແໜງຄຸ້ມຄອງສາຍສົ່ງໄຟຟ້າ ສົມທົບກັບບ້ານ ລົງກວດກາຕົວຈິງຕາມແລວສາຍສົ່ງໄຟຟ້າແຮງສູງເປັນປົກກະຕິ ຖ້າຫາກມີສິ່ງປຸກສ້າງ ຫລື ສິ່ງກີດຂວາງ ທີ່ຂັດຕໍ່ມາດຕະຖານເຕັກນິກໄຟຟ້າລາວ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ເພື່ອລະດົມຍົກຍ້າຍອອກຈາກແລວສາຍສົ່ງ ເພື່ອສະດວກແກ່ຜູ້ຄຸ້ມຄອງແລວສາຍສົ່ງ ເພາະສາຍສົ່ງໄຟຟ້າເປັນຂອງສ່ວນລວມ.

4. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງແຈ້ງລະດົມ ຫ້າມບໍ່ໃຫ້ພໍ່ແມ່ປະຊາຊົນປຸກສິ່ງປຸກສ້າງທີ່ຂັດມາດຕະຖານເຕັກນິກໄຟຟ້າລາວກ້ອງສາຍສົ່ງໄຟຟ້າແຮງສູງ ແລະ ລະດົມໃຫ້ຕັດຕົ້ນໄມ້ທີ່ຢູ່ກ້ອງສາຍສົ່ງໄຟຟ້າແຮງສູງອອກ ເພື່ອຄວາມປອດໄພ ແລະ ສະດວກໃນການຕິດຕາມ-ກວດກາຖາງແລວສາຍສົ່ງ.

5. ຫ້າມບໍ່ໃຫ້ຮ້ານຊື້-ຂາຍເຫລັກ ຊື້-ຂາຍເຫຼັກສານເສົາໄຟຟ້າແຮງສູງ ຈາກບຸກຄົນ ຫລື ກຸ່ມຄົນບໍ່ດີ ທີ່ນຳມາຂາຍໃຫ້ເດັດຂາດ ຖ້າຫາກຝ່າຝືນ ແລະ ໃຫ້ການສະໜັບສະໜູນການກະທຳຜິດດັ່ງກ່າວ ຈະຖືກປັບໃໝ ແລະ ຈັບຕົວມາດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

6. ມອບໃຫ້ຄະນະກຳມະການສະເພາະກິດ ປະຕິບັດໜ້າທີ່ໃນການຕິດຕາມ, ກວດກາ, ປຸກລະດົມ, ໄກ່ເກ່ຍ ແລະ ເປັນໃຈກາງໃນການປະສານງານ.

7. ໃຫ້ບັນດາພະແນກ, ກົມກອງ - ອົງການທຽບເທົ່າ, ລັດວິສາຫະກິດ ແລະ ບັນດາເມືອງ ໃນທົ່ວແຂວງຄຳມ່ວນ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນສະກັດກັ້ນກຸ່ມຄົນບໍ່ດີດັ່ງກ່າວ ເພື່ອໃຫ້ໄດ້ຮັບໝາກຜົນ ແລະ ເປັນໄປຕາມຄາດໝາຍທີ່ວາງໄວ້.

8. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງຄຳມ່ວນ

ບ່ອນສົ່ງ:

- ບັນດາເມືອງ 10 ສະບັບ
- ພະແນກ,ກົມກອງຕ່າງໆບ່ອນລະ 1 ສະບັບ
- ຫ້ອງການ ຄລສກ2 1 ສະບັບ
- ເກັບມ້ຽນ 1 ສະບັບ

ໂລໄດ ສຸດາພອນ